**ມິຊຊາອາທິດທີ 5 ກໍານົດບໍາເພັນສິນ**

**ວັນທີ 3 ເມສາ 2022**



**ພຣະວໍລະສານໂດຍນັກບຸນຢວງ 8, 1-11**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດຂຶ້ນໄປເນີນພູເຂົາໝາກກອກ. ແຕ່ພໍຮຸ່ງອະລຸນ, ພຣະອົງກໍສະເດັດກັບມາພຣະວິຫານ ແລະປະຊາຊົນທຸກຄົນເຂົ້າມາຫາພຣະອົງ. ພຣະອົງຈຶ່ງປະທັບນັ່ງແລະຕັ້ງຕົ້ນເທດສະໜາສັ່ງສອນ. ເວລານັ້ນພວກນັກປາດພຣະຄໍາພີແລະພວກຟາຣີເຊວໄດ້ນໍາຍິງຜູ້ໜຶ່ງຊຶ່ງຈັບໄດ້ກໍາລັງລ່ວງປະເວນີມາຕໍ່ໜ້າພຣະອົງແລະປະຊາຊົນ ແລ້ວທູນພຣະອົງວ່າ: ພຣະອາຈານ! ຍິງຄົນນີ້ຈັບໄດ້ພວມກໍາລັງລ່ວງປະເວນີຢູ່. ໃນກົດໝາຍ, ໂມແຊສັ່ງໃຫ້ເອົາຫີນແກວ່ງໃສ່ຄົນຊະນິດນີ້. ສ່ວນທ່ານເດຈະວ່າແນວໃດ? ພວກເຂົາເວົ້າດັ່ງນີ້ ກໍເພື່ອຫວັງຈະຈັບຜິດແລະຫາເລື່ອງໃສ່ພຣະອົງ. ພຣະເຢຊູເຈົ້າຊົງກົ້ມລົງແລ້ວເອົານິ້ວມືຂຽນໃສ່ດິນ.

ຍ້ອນເຂົາຖາມຈີ້ຈໍ້ຫລາຍ, ພຣະອົງຈຶ່ງເງີຍພຣະພັກຂຶ້ນກ່າວແກ່ພວກເຂົາວ່າ: ແມ່ນໃຜໃນພວກທ່ານບໍ່ມີບາບ ເຊີນແກວ່ງຫີນໃສ່ລາວກ່ອນ. ແລ້ວພຣະອົງຊົງກົ້ມລົງຂຽນໃສ່ດິນຕໍ່ໄປ. ເມື່ອໄດ້ຍິນດັ່ງນີ້, ພວກເຂົາກໍໜີໄປເທື່ອລະຄົນ, ຜູ້ເຖົ້າໄປກ່ອນ ຍັງເຫລືອແຕ່ພຣະອົງຜູ້ດຽວກັບຍິງຄົນນັ້ນ.

ພຣະເຢຊູເຈົ້າຈຶ່ງເງີຍຂຶ້ນກ່າວແກ່ຍິງຄົນນັ້ນວ່າ: ນາງເອີຍ! ເຂົາໄປໃສໝົດແລ້ວ? ບໍ່ມີໃຜຕັດສິນໃສ່ໂທດເຈົ້າບໍ? ຍິງຜູ້ນັ້ນຕອບວ່າ: ບໍ່ມີໃຜ ຂ້ານ້ອຍ! ພຣະອົງຊົງກ່າວວ່າ: ເຮົາກໍບໍ່ເອົາໂທດເຈົ້າຄືກັນ. ໄປເສຍ ແລະຢ່າທໍາບາບອີກຕໍ່ໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດທີ່ຜ່ານມາ, ວາຈາພຣະເຈົ້າໄດ້ຍົກໃຫ້ພວກເຮົາເຫັນເຖິງໃບໜ້າແຫ່ງຄວາມຮັກເມດຕາຂອງພຣະເຢຊູເຈົ້າທີ່ພ້ອມຈະໃຫ້ອະໄພລູກລ້າງຜານຂອງຕົນແລະຮັບເຂົາຄືນສູ່ຄອບຄົວແລະງານລ້ຽງຂອງພຣະອົງດ້ວຍຄວາມຍິນດີ.

ວັນອາທິດນີ້, ວາຈາພຣະເຈົ້າກໍຍົກໃຫ້ພວກເຮົາເຫັນເຖິງຮູບພາບຂອງພຣະເຢຊູເຈົ້າຜູ້ທີ່ມາໃນໂລກນີ້ບໍ່ແມ່ນເພື່ອຕັດສິນໂລກແຕ່ເພື່ອຊ່ວຍທຸກຄົນໃຫ້ຣອດຊີວິດ.

ວັນນີ້, ເມື່ອພຣະເຢຊູເຈົ້າກຳລັງປະຕິບັດວຽກງານຂອງພຣະບິດາຜ່ານການເທດສອນພຣະທຳບັນຍັດໃນພຣະວິຫານຕໍ່ໜ້າປະຊາຊົນທັງຫລາຍ.ກໍມີພວກຟາຣີເຊວແລະອາຈານພຣະຄຳພີນຳຍິງຜູ້ໜຶ່ງຊຶ່ງພວກເຂົາກ່າວຫາວ່າໄດ້ລ່ວງປະເວນີເຂົ້າໃນພຣະວິຫານທ່າມກາງປະຊາຊົນແລະຕໍ່ໜ້າພຣະເຢຊູເຈົ້າເພື່ອຕັດສິນນາງ. ພວກເຂົາອີງເທິງພຣະທຳບັນຍັດຂອງໂມແຊເພື່ອຕັດສິນຍິງຜູ້ນີ້ດ້ວຍການແກວ່ງກ້ອນຫີນໃຫ້ຕາຍ. ສ່ວນພຣະເຢຊູເຈົ້າ, ພຣະອົງບໍ່ໄດ້ກ່າວຫຍັງ, ແຕ່ກົ້ມລົງແລ້ວເອົານິ້ວຂຽນໃສ່ດິນ. ທັດສະນະທ່າທີຂອງພຣະເຢຊູເຈົ້ານີ້ສະແດງໃຫ້ພວກເຮົາເຫັນວ່າ ພຣະອົງບໍ່ໄດ້ຕັດສິນໃຜ. ເພາະການທີ່ພຣະອົງມາໃນໂລກນີ້ບໍ່ແມ່ນເພື່ອຕັດສິນໂລກແຕ່ເພື່ອຊ່ວຍຄົນບາບໃຫ້ຣອດຊີວິດ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວກັບພວກຟາຣີເຊວແລະອາຈານພຣະຄຳພີວ່າ: "ໃນພວກເຈົ້າ, ຫາກຜູ້ໃດບໍ່ມີບາບກໍໃຫ້ແກວ່ງກ້ອນຫີນໃສ່ຍິງຜູ້ນີ້ກ່ອນ". ຄຳເວົ້ານີ້ຂອງພຣະເຢຊູເຈົ້າທຳໃຫ້ພວກຟາຣີເຊວແລະອາຈານພຣະຄຳພີໄດ້ພົບກັບຕົວຕົນທີ່ແທ້ຈິງຂອງຕົນອັນແມ່ນສະພາບຄົນບາບ. ດ້ວຍເຫດນີ້, ພວກເຂົາຈຶ່ງໄດ້ຈາກໄປເທື່ອລະຄົນແລະບໍ່ຕັດສິນຍິງຜູ້ນີ້ອີກ.

ສ່ວນພຣະເຢຊູເຈົ້າ, ເຖິງວ່າພຣະອົງບໍ່ມີບາບ ແຕ່ພຣະອົງກໍບໍ່ໄດ້ຕັດສິນຍິງຜູ້ນີ້. ພຣະອົງກ່າວກັບຍິງຜູ້ນີ້ວ່າ: "ເຮົາເອງກໍບໍ່ຕັດສິນເຈົ້າ. ຈົ່ງໄປ, ແລະຢ່າກະທຳບາບອີກ". ໝາຍວ່າພຣະອົງໄດ້ໃຫ້ໂອກາດຍິງຜູ້ນີ້ເພື່ອເລີ່ມຕົ້ນຊີວິດໃໝ່, ເປັນຄົນໃໝ່ແລະເດີນບົນເສັ້ນທາງໃໝ່ອັນແມ່ນເສັ້ນທາງແຫ່ງການກັບຈິດປ່ຽນໃຈ. ນີ້ແລແມ່ນຂ່າວດີສຳລັບພວກເຮົາຜູ້ເຊື່ອໃນພຣະເຢຊູເຈົ້າ. ເຖິງວ່າພວກເຮົາຈະເປັນຄົນບາບໜາປານໃດກໍຕາມ, ແຕ່ພຣະອົງກໍໃຫ້ໂອກາດພວກເຮົາເພື່ອກັບຈິດປ່ຽນໃຈແລະໄດ້ຣອດຊີວິດ. ເພາະພຣະອົງບໍ່ປາດຖະໜາໃຫ້ຜູ້ໃດຕ້ອງສູນເສຍວິນຍານໄປ.

**ພາວະນາ**

ໂອພຣະເຢຊູເຈົ້າໃນກຳນົດບຳເພັນສິນນີ້, ໂຜດຊ່ວຍລູກໃຫ້ຮູ້ຈັກເອົາແບບຢ່າງພຣະອົງຄືບໍ່ຕັດສິນຄົນອື່ນ, ແຕ່ໃຫ້ໂອກາດຄົນອື່ນເພື່ອເຂົາຈະໄດ້ຜັນປ່ຽນຊີວິດແລະກັບມາສູ່ເສັ້ນທາງອັນຖືກຕ້ອງ. ຍ້ອນທຸກຄົນລ້ວນແຕ່ເປັນຄົນບາບແລະຕ້ອງການການກັບຈິດປ່ຽນໃຈຢູ່ສະເໝີ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ